

# ຟາມປະສົມໝື່ງດຽວ

ຂ້າພະເຈົ້າຊື່ ນາງ ຈັນດາລາ ພົມມະສອນ, ອາຍຸ 24 ປີ. ຈົບປະລິນຍາຕີ, ສາຂາປ້ອງກັນພືດ. ຂ້າພະເຈົ້າ ເຂົ້າຮ່ວມກິດຈະກຳ ຍ້ອນວ່າຮຽນກ່ຽວກັບກະສິກຳມາ ແລະ ກ່ອນຮຽນຈົບໄດ້ວາງແຜນຢາກປັບປຸງວິທີການ ແລະ ຂະຫຍາຍສວນຜັກທີ່ ພໍ່ - ແມ່ ເຮັດມາກ່ອນໃຫ້ເປັນລະບົບ , ສາມາດເປັນອາຊີບທີ່ສ້າງລາຍໄດ້ ແລະ ໝັ້ນຄົງໃຫ້ແກ່ຄອບຄົວ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ເປັນມູນຄ່າທັງໝົດແມ່ນ 10,000,000 ກີບ (ສິບລ້ານກີບຖ້ວນ).

**ປະເພດທຸລະກິດ:**
ທຸລະກິດທີ່ເຮັດແມ່ນ ປູກຜັກອິນຊີ, ລ້ຽງປານິນ ແລະ ລ້ຽງກົບຂາຍ. ປັດຈຸບັນຜັກທີ່ປູກແມ່ນມີ ຜັກກາດ, ຫອມບົ່ວ, ຫອມປ້ອມ, ຕົ່ງໂອ, ສະຫຼັດ, ຫອມລາບ, ໝາກເລັ່ນນ້ອຍ, ສາລີ ແລະ ລ້ຽງປາ.

**ການນຳໃຊ້ທຶນ:**
ໃນປີ 2019 ທຶນທີ່ໄດ້ມາແມ່ນ ໄດ້ນຳມາ ປັບດິນ ເພື່ອຂະຫຍາຍ ສວນຜັກໃຫ້ກວ້າງຂຶ້ນ, ຊື້ອຸປະກອນລ້ອມຮົ້ວສວນ, ປັບປຸງລະບົບນ້ຳ-ໄຟຟ້າ, ຊື້ປານ້ອຍ, ຊື້ກົບນ້ອຍມາລ້ຽງ ແລະ ຊື້ແນວພັນຜັກ.

**ເປົ້າໝາຍ:**
ໃນປີ 2020 ຂອງຂ້າພະເຈົ້າແມ່ນ ຈະຕັ້ງໃຈ ປູກຜັກຂາຍໃຫ້ໄດ້ 1,536 ກິໂລ, ລ້ຽງປາຂາຍ 80 ກິໂລ ແລະ ຂາຍກົບ 50 ກິໂລ.

**ບັນຫາທີ່ພົບພໍ້:**
ກົບນ້ອຍທີ່ນຳມາປ່ອຍ ຕາຍເປັນຈຳນວນຫຼາຍ, ເປັນຍ້ອນຊື້ກົບມາຈາກບ່ອນອື່ນ ມັນບໍ່ສາມາດປັບສະພາບອາກາດໄດ້ ແລະ ມີໜູມາກັດກົບ. ແກ້ໄຂໂດຍການເລືອກຊື້ແນວພັນ ທີ່ຢູ່ໃນສະພາບອາກາດໃກ້ຄຽງກັນມາລ້ຽງ ເພື່ອຫລຸດຜ່ອນຄວາມສ່ຽງເລື່ອງການປັບຕົວ ແລະ ການຕາຍ. ສ່ວນຜັກແມ່ນມີຊູ່ແຂ່ງຫຼາຍ ໄດ້ຂາຍຜັກໜ້ອຍລົງຍ້ອນເຮົາບໍ່ມີລູກຄ້າປະຈຳ. ຜັກທີ່ບໍ່ໄດ້ຂາຍແມ່ນໄດ້ເອົາໄປເກືອປາ, ເກືອໝູ, ເກືອໄກ່, ເກືອເປັດ, ເນື່ອງຈາກວ່າມີຄົນຜະລິດຫລາຍແຕ່ຄົນຊື້ຫນ້ອຍ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**
- ໃນປີ 2020 ຂາຍຜັກ 1,362 ກິໂລ, ສາລີ 134 ກິໂລ, ກົບ 55 ກິໂລ, ປາ 177 ກິໂລ ລວມເປັນເງິນທັງຫມົດ= 24.992,000 ກີບ.
- ໃນປີ 2021 ໄດ້ປູກຜັກ, ຫອມບົ່ວ, ຫອມປ້ອມ, ຍອດຖົ່ວເຂັນ, ຜັກກາດຂອມ, ຜັກກາກຂາວ, ຜັກຫອມລາບ, ຜັກຈຸ່ມ, ຜັກກາດຕີນຫມີ, ຜັກຫຸມແດງ, ຜັກຫຸມຂຽວ, ຜັກສະຫລັດ, ຜັກບົ້ງ ແລະ ຜັກຕັ້ງໂອ. ຈ□ານວນຜັກທີ່ຜະລິດໄດ້ 1410 ກິໂລ, ຂາຍຜັກຫມົດປີແມ່ນ 199 ກິໂລ ລວມເປັນເງິນທັງຫມົດ 1.965,000 ກີບ.



